ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານໜອງຄັນຄູ ເມືອງນາຊາຍທອງ
ແຂວງນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ 030-988-2809

ເລກທີ: 135 /ລອທ
ນະຄອນຫຼວງວຽງຈັນ,ເລກທີ 14 OCT 2026

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ອຳນວຍການໃຫ່ຍຕະຫຼາດຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື.

ເລື່ອງ : ລາຍງານຄວາມຄືບໜ້າ ແຜນປັບປຸງແກ້ໄຂການດ້ອຍຄ່າຂອງທຶນ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ປະຈຳໄຕມາດ3 ປີ 2026.

- ອີງຕາມ ລະບຽບວ່າດ້ວຍການຈົດທະບຽນຮຸ້ນ(ສະບັບປັບປຸງ) ເລກທີ 007/23 ຕລຊລ, ລົງວັນທີ 12 ກັນຍາ 2023 ມາດຕາ 26.
- ອີງຕາມ ໜັງສື ແຈ້ງການກ່ຽວກັບການຮັກສາສະຖານະການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 603/ຕລຊລ, ລົງວັນທີ 07 ພຶດສະພາ 2026
- ອີງຕາມ ແຜນປັບປຸງແກ້ໄຂການດ້ອຍຄ່າຂອງທຶນ ສະບັບເລກທີ 073/ລອທ,ລົງວັນທີ 25 ພຶດສະພາ 2026.
- ອີງຕາມ ລາຍງານຄວາມຄືບໜ້າ ແຜນປັບປຸງແກ້ໄຂການດ້ອຍຄ່າຂອງທຶນ ສະບັບເລກທີ 097/ລອທ,ລົງວັນທີ 14 ກໍລະກົດ 2026.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບກ່ຽວກັບ ຄວາມຄືບໜ້າແຜນປັບປຸງແກ້ໄຂການດ້ອຍຄ່າຂອງທຶນ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ຜ່ານການດຳເນີນທຸລະກິດຂອງໄຕມາດ3 ທີ່ຜ່ານມາ ເຫັນວ່າ ບໍລິສັດ ມີລາຍຮັບຫຼຸດລົງຈາກການບໍລິການຂາຍສິນຄ້າ(ຜະລິດຕະພັນ) ໃນອັດຕາສ່ວນ 6.18% ເຊິ່ງເປັນມູນຄ່າທັງໝົດ 722ລ້ານກີບ ເມື່ອທຽບໃສ່ ໄຕມາດ2 ທີ່ຜ່ານມາ. ລາຍລະອຽດດັ່ງນີ້:

ລາຍການສິນຄ້າ	ໄຕມາດ2 (ລ້ານກີບ)	ໄຕມາດ3 (ລ້ານກີບ)	ເພີ່ມຂຶ້ນ/ຫຼຸດລົງ (ລ້ານກີບ)	ຄິດເປັນ %
ນ້ຳມັນປາມດິບ	9,341	8,111	(1,230)	(10.52)
ຕົ້ນປາມ	267	671	404	3.46
ກາກປາມ	1,980	991	(988)	(0.93)
ປຸ໋ຍ	111	3	(108)	(8.45)
ອື່ນໆ	-	1,200	1,200	10.26
ລວມທັງໝົດ	**11,701**	**10,978**	**(722)**	**(6.18)**

ບໍລິສັດໄດ້ຮັບຜົນກະທົບຈາກ ສະພາບອາກາດແຫ້ງແລ້ງ, ລາຄາຕົ້ນທຶນສິນຄ້າສູງຂຶ້ນ, ຜົນຜະລິດຫຼຸດລົງ, ລູກສວນບາງກຸ່ມຂາດການດູແລ, ການບຳລຸງຮັກສາຕົ້ນປາມ ແລະ ຫັນໄປປູກພືດຊະນິດອື່ນ. ຈຶ່ງເຮັດໃຫ້ຜົນຜະລິດບໍ່ພຽງພໍຕໍ່ຄວາມຕ້ອງການໃນທ້ອງຕະຫຼາດ, ບໍລິສັດຈຶ່ງຈຳເປັນນຳເຂົ້າວັດຖຸດິບຈາກພາຍນອກ ເພື່ອນຳມາຕອບສະໜອງໃຫ້ລູກຄ້າພາຍໃນ ດັ່ງນັ້ນ, ຈຶ່ງເປັນສາເຫດທີ່ສົ່ງຜົນກະທົບໂດຍຕົງຕໍ່ຍອດຂາຍ ແລະ ຜົນຜະລິດທີ່ຫຼຸດລົງ.

ຢ່າງໃດກໍຕາມ ຜູ້ອຳນວຍການ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໄດ້ປຶກສາຫາລືຫາແນວທາງແກ້ໄຂບັນຫາທີ່ເກີດຂຶ້ນໃນຄັ້ງນີ້ ເພື່ອກອບກູ້ສະຖານະການ ແລະ ສະພາບເສດຖະກິດໃຫ້ດີຂຶ້ນຈາກເດີມ, ນອກນັ້ນບໍລິສັດຍັງໄດ້ເນັ້ນການສົ່ງເສີມປູກປາມ ແລະ ພັກດັນໃຫ້ຊາວສວນປາມເອົາໃຈໃສ່ໃນການດູແລ, ບຳລຸງຮັກສາເພື່ອຟື້ນຟູຜົນຜະລິດທີ່ຈະໄດ້ຮັບເພີ່ມຂຶ້ນໃນອະນາຄົດ ແລະ ສິ່ງອອກນອກປະເທດໄດ້.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຮັບຊາບ ແລະ ເຂົ້າໃຈຕໍ່ກັບບັນຫາທີ່ເກີດຂຶ້ນດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ຜູ້ອຳນວຍການໃຫ່ຍ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ປອ. ເສດ ພັດທະນະມາດ